**ມິຊຊາອາທິດທີ 4 ກຳນົດທຳມະດາ ປີ C**

**ວັນທີ 03 ກຸມພາ 2019**



**ພຣະວໍລະສານໂດຍນັກບຸນລູກາ 4, 21-30**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງຕັ້ງຕົ້ນກ່າວແກ່ພວກເຂົາວ່າ: ພຣະຄຳພີຕອນທີ່ພວກທ່ານໄດ້ຍິນກັບຫູຂອງພວກທ່ານເອງນັ້ນສຳເລັດລົງແລ້ວໃນມື້ນີ້ເອງ. ຄົນທັງຫລາຍທີ່ຮູ້ເຫັນເປັນພິຍານກໍພາກັນຍ້ອງຍໍພຣະວາຈາອັນອອນຊອນທີ່ອອກມາຈາກປາກຂອງພຣະອົງແລະເວົ້າວ່າ: ເພິ່ນນີ້ບໍ່ແມ່ນລູກຊາຍຂອງຢໍແຊັບນັ້ນບໍ?

ພຣະອົງຊົງກ່າວວ່າ: ແມ່ນແລ້ວ, ພວກເຈົ້າຄືຢາກເວົ້າກັບເຮົາຕາມສຸພາສິດທີ່ວ່າ: ທ່ານໝໍເອີຍ! ຈົ່ງປົວຕົວເອງກ່ອນເຖີດ. ກິດຈະການທັງຫລາຍທີ່ພວກເຮົາໄດ້ຍິນທ່ານທຳຢູ່ເມືອງກາຟານາອຸມນັ້ນ, ກໍຈົ່ງທຳຢູ່ບ້ານເກີດເມືອງນອນຂອງທ່ານດູ! ພຣະອົງຊົງກ່າວກັບພວກເຂົາວ່າ: ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ບໍ່ມີປະພາສົກຄົນໃດໄດ້ຮັບການຕ້ອນຮັບຢ່າງດີຢູ່ບ້ານເກີດເມືອງນອນຂອງຕົນດອກ. ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ໃນສະໄໝເອລີອາ, ເມື່ອເກີດແຫ້ງແລ້ງເປັນເວລາສາມປີເຄິ່ງແລະເກີດອຶດຢາກໃຫຍ່ຫລວງທົ່ວປະເທດນັ້ນ, ກໍມີພວກແມ່ໝ້າຍຈຳນວນມາກຢູ່ເມືອງອິສຣາແອນ. ແຕ່ປະພາສົກເອລີອາບໍ່ໄດ້ຖືກສົ່ງໄປຫາພວກນາງໝ້າຍຄົນໃດໃນຈຳນວນນາງໝ້າຍເຫລົ່ານີ້, ນອກຈາກໄປຫານາງໝ້າຍທີ່ເມືອງຊາແລັບຕາຢູ່ປະເທດຊີດອນເທົ່ານັ້ນ. ໃນສະໄໝປະພາສົກເອລີເຊກໍມີຄົນຂີ້ທູດມາກມາຍຢູ່ປະເທດອິສຣາແອນ, ແຕ່ບໍ່ມີໃຜຫາຍດີຈັກຄົນ, ນອກຈາກນາອາມັນຊາວຊີເຣັຍເທົ່ານັ້ນ.

ເມື່ອໄດ້ຍິນດັ່ງນີ້, ທຸກຄົນໃນໂຮງທັມກໍມີຄວາມຄຽດແຄ້ນຢ່າງໃຫຍ່ພາກັນລຸກຮື້ຂຶ້ນແກ່ພຣະອົງໄປນອກເມືອງແລ້ວພາພຣະອົງໄປເທິງຈອມພູບ່ອນເມືອງນັ້ນຕັ້ງຢູ່ເພື່ອຈະຊຸກພຣະອົງລົງໄປລຸ່ມ. ແຕ່ພຣະອົງຊົງພີກຕົວຜ່າກາງພວກເຂົາໄປ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 4, 21-30**

ວາຈາຂອງພຣະເຈົ້າວັນນີ້ສືບຕໍ່ພຣະວໍລະສານຊຶ່ງພວກເຮົາໄດ້ຟັງແລະລໍາເພິງໃນວັນອາທິດທີ່ຜ່ານມາ. ພຣະເຢຊູເຈົ້າໄດ້ເຂົ້າໃນໂຮງທໍາມື້ວັນພຣະ, ພຣະອົງໄດ້ອ່ານແລະອະທິບາຍຂໍ້ຄວາມຂອງປະພາສົກອີຊາຢາແລະກ່າວກັບຝູງຊົນວ່າ: ສິ່ງທີ່ພວກທ່ານໄດ້ຍິນກັບຫູຂອງພວກທ່ານເອງນັ້ນໄດ້ສໍາເລັດລົງໃນວັນນີ້. ຍ້ອນຫຍັງ? ຍ້ອນວ່າສິ່ງທີ່ປະພາສົກອີຊາຢາກ່າວມານັ້ນເປັນການປະກາດລ່ວງໜ້າເຖິງພາລະກິດການກູ້ໄຖ່ຊຶ່ງພຣະເຢຊູເຈົ້າຈະກະທໍາໃຫ້ສໍາເລັດໃນຕົວຂອງພຣະອົງຜ່ານການຕາຍແລະການກັບເປັນຄືນມາໃນວັນທີສາມ. ຝູງຊົນທີ່ຟັງພຣະເຢຊູເຈົ້າແທນທີ່ຈະມີຄວາມຍິນດີຍ້ອນພວກເຂົາໄດ້ພົບກັບພຣະເມດຊີອາທີ່ບັນດາປະພາສົກໄດ້ປະກາດໄວ້ລ່ວງໜ້າ. ພວກເຂົາກັບມີຄວາມໂມໂຫບໍ່ຕ້ອນຮັບພຣະເຢຊູເຈົ້າແລະຍິ່ງໄປກວ່ານັ້ນພວກເຂົາໄດ້ພາກັນຈັບພຣະອົງເພື່ອຫວັງຈະຊຸກພຣະອົງລົງມາແຕ່ຈອມພູສູງ. ເປັນຫຍັງຝູງຊົນຈຶ່ງມີປະຕິກິລິຍາຮຸນແຮງແບບນີ້? ອາດຈະແມ່ນພວກເຂົາເຫັນພຣະເຢຊູເຈົ້າເປັນພຽງແຕ່ຄົນທໍາມະດາຜູ້ໜຶ່ງໃນໝູ່ບ້ານນາຊາແລັດ. ລູກຂອງນາຍຊ່າງໄມ້ທຸກຈົນຄົນໜຶ່ງແລະມານດາຂອງພຣະອົງກໍເປັນພຽງແຕ່ແມ່ບ້ານທໍາມະດາ. ເຮັດແນວໃດຄໍາເວົ້າຂອງພຣະເຢຊູເຈົ້າຈຶ່ງເປັນທີ່ຍອມຮັບແລະເຊື່ອຖືຈາກຄົນອື່ນໄດ້? ເຫດການນີ້ບໍ່ພຽງແຕ່ຢູ່ໃນສະໄໝຂອງພຣະເຢຊູເຈົ້າເທົ່ານັ້ນ, ໃນສະໄໝປັດຈຸບັນຂອງພວກເຮົາກໍເຊັ່ນດຽວກັນ. ຫລາຍຄັ້ງພວກເຮົາຕີລາຄາຄົນອື່ນພຽງແຕ່ຮູບແບບພາຍນອກເຊັ່ນ: ຄວາມຮູ້ຄວາມສາມາດ, ຄວາມຮັ່ງມີ, ການມີຖານະໃນສັງຄົມ. ຄໍາເວົ້າແລະຄວາມຄິດເຫັນຂອງຄົນເຫລົ່ານີ້ເປັນທີ່ໜ້າເຊື່ອຖືສະເໝີ ເພາະເຂົາມີສິ່ງຄໍ້າປະກັນຢູ່ເບື້ອງຫລັງ. ກົງກັນຂ້າມ, ຖ້າແມ່ນຄົນທຸກຈົນ, ບໍ່ມີຄວາມສະຫລາດຫລັກແຫລມ, ບໍ່ມີຈຸດຢືນໃນສັງຄົມ. ສຽງປາກສຽງເວົ້າຂອງຄົນເຫລົ່ານີ້ເຖິງວ່າເຂົາຈະເວົ້າແຕ່ຄວາມຈິງກໍບໍ່ມີໃຜຢາກຟັງແລະເຊື່ອຖື. ເພາະຄໍາເວົ້າຂອງເຂົາບໍ່ມີສິ່ງຄໍ້າປະກັນຢູ່ເບື້ອງຫລັງ.

ສິ່ງທີ່ກ່າວມານີ້ກໍໃຫ້ເກີດອຸປະສັກໃນການເປັນພິຍານເຖິງພຣະເຢຊູເຈົ້າແລະເປັນຕົ້ນໃນການປະກາດວາຈາຂອງພຣະອົງເຊັ່ນ: ໃນການເປັນຜູ້ນໍາໃນພິທີພາວະນາ, ໃນການສອນຄໍາສອນ, ແລະໃນກິດຈະສັດທາອື່ນໆ. ຍ້ອນລູກສິດບໍ່ຮ່ອນລື່ນອາຈານ. ດັ່ງນັ້ນ, ພວກເຮົາຜູ້ເປັນລູກສິດຂອງພຣະເຢຊູເຈົ້າຈຶ່ງຕ້ອງຖືກປະຕິເສດ, ໝິ່ນປະໝາດເໝືອນກັບພຣະອົງ. ແຕ່ສິ່ງນີ້ເປັນເຄື່ອງໝາຍບອກໃຫ້ພວກເຮົາຮູ້ວ່າພວກເຮົາກໍາລັງເດີນບົນເສັ້ນທາງທີ່ຖືກຕ້ອງອັນແມ່ນເສັ້ນທາງແຫ່ງການເປັນແສງສະວ່າງໃຫ້ກັບຄົນອື່ນແລະເປັນພິຍານໃຫ້ກັບພຣະເຢຊູເຈົ້າ. ບໍາເນັດລາງວັນຂອງພວກເຮົາອາດຈະບໍ່ແມ່ນຢູ່ໃນໂລກນີ້ ແຕ່ແນ່ນອນຢູ່ໃນໂລກໜ້າຮ່ວມກັບຜູ້ເປັນອາຈານຂອງພວກເຮົາຄືພຣະເຢຊູກຣິສໂຕເຈົ້າ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້, ເປັນກໍາລັງໃຈໃຫ້ພວກເຮົາຜູ້ເປັນລູກສິດຂອງພຣະເຢຊູເຈົ້າໃນການປະກາດແລະການເປັນພິຍານເຖິງພຣະອົງຕໍ່ໜ້າອຸປະສັກຄວາມຫຍຸ້ງຍາກໃນຊີວິດແລະໃນສັງຄົມ. ເພື່ອໃຫ້ທຸກຄົນໄດ້ຮູ້ເຖິງອົງແຫ່ງຄວາມຈິງອັນແລະອົງແຫ່ງຄວາມຮັກແມ່ນພຣະເຢຊູເຈົ້ານັ້ນເທີ້ນ.

ຄຸນພໍ່ ອົງຕວນ ກຽດຕິສັກ